ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ຄະນະຮັບຜິດຊອບການປະມູນ

ເລກທີ 0829 /ກງ

ນະຄອນຫຼວງວຽງຈັນ, ວັນທີ 21 ມີນາ 2025

# ແຈ້ງເຊີນປະມູນ

**ເຖິງ:** ບັນດາບໍລິສັດທີ່ເປັນຕົວແທນຂາຍລົດເກັງທີ່ນຳໃຊ້ໄຟຟ້າ 100% ຢູ່ ສປປລາວ.

**ເລື່ອງ:** ເຂົ້າຮ່ວມການປະມູນເປີດກວ້າງ ໃນການສະໜອງລົດເກັງທີ່ນຳໃຊ້ໄຟຟ້າ 100% (EV) ໃຫ້ແກ່ລັດຖະບານ ຈຳນວນ 35 ຄັນ.

- ອີງຕາມ ກົດໝາຍ ວ່າດ້ວຍຊັບສິນຂອງລັດ ສະບັບເລກທີ 18/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 353/ນຍ, ລົງວັນທີ 02 ສິງຫາ 2024;
- ອີງຕາມ ໜັງສືສະເໜີ ຂອງກົມຄຸ້ມຄອງຊັບສິນແຫ່ງລັດ ສະບັບເລກທີ 1733/ຄຊລ, ລົງວັນທີ 20 ມີນາ 2025.

ກະຊວງການເງິນ ໃນນາມຕາງໜ້າຄະນະຮັບຜິດຊອບການປະມູນຈັດຊື້ລົດ ຂໍຖືເປັນກຽດແຈ້ງມາຍັງບັນດາບໍລິສັດທີ່ເປັນຕົວແທນຂາຍລົດເກັງທີ່ນຳໃຊ້ໄຟຟ້າ 100% ຢູ່ ສປປ ລາວ ຊາບວ່າ: ປະຈຸບັນ ລັດຖະບານມີຄວາມຕ້ອງການຈັດຊື້ລົດເກັງໄຟຟ້າ 100% **ຈຳນວນ 35 ຄັນ** ເພື່ອນຳໃຊ້ເຂົ້າໃນວຽກງານລັດຖະການ ເຊິ່ງມີລາຍລະອຽດ ເງື່ອນໄຂພື້ນຖານ ດັ່ງນີ້ :

I. **ເງື່ອນໄຂພື້ນຖານກ່ຽວກັບລົດ.**

1. ເປັນລົດເກັງ ທີ່ນຳໃຊ້ພະລັງງານຈາກໝໍ້ໄຟ (Battery 100%) ທີ່ສາມາດສາກໄຟໄດ້, ສີດຳ, ພວງມະໄລຊ້າຍ, ປີຜະລິດ 2025 (ມີລາຍລະອຽດກ່ຽວກັບສະເປັກ ຍີ່ຫໍ້ ໃນເອກະສານເງື່ອນໄຂການປະມູນ);
2. ມາດຕະຖານຄວາມປອດໄພຂອງໝໍ້ໄຟ ເປັນ Battery Litium-ion ທີ່ຜ່ານຂະບວນການທົດສອບ UNCEC R100, R136 ໂດຍຕ້ອງມີໃບຢັ້ງຢືນທົດສອບຈາກໂຮງງານຜະລິດ ຮັບປະກັນ Battery ຢ່າງຕ່ຳ 8 ປີຂຶ້ນໄປ;
3. ມີລະບົບຄວາມປອດໄພ, ຮັບປະກັນໃນການຂັບຂີ່ ທີ່ໄດ້ຮັບການທົດສອບ ແລະ ຮັບຮອງໂດຍສາກົນ ທີ່ມີການຢັ້ງຢືນ;
4. ມີສູນເພື່ອບໍລິການທັງການຂາຍ ແລະ ການບໍລິການອາໄຫຼ່ພ້ອມທັງຮັບປະກັນ;
5. ປະເພດລົດເກັງໄຟຟ້າ ທີ່ຈັດຊື້:

ໃນນີ້: + ຂະໜາດຂອງລົດ ຄວາມຍາວຫຼາຍກວ່າ 4885 ມມ;



CS สแกนด้วย CamScanner

+ ຂະໜາດຄວາມກວ້າງ ຫຼາຍກວ່າ 1840 ມມ;

+ ລະບົບເບາະໜັງ ແລະ ໄຟຟ້າໜ້າຫຼັງ, ລະບົບແວ່ນອັດຕະໂນມັດ, ລະບົບນຳທາງ GPS, ລະບົບເກຍອັດຕະໂນມັດ, ໜ້າຈໍສະແດງຜົນສຳຜັດ, ລະບົບເບກ ABS dis beake ໜ້າຫຼັງ;

+ ບໍລິສັດຕ້ອງຮັບປະກັນໃຫ້ມີສະຖານີສາກແບບໄວ ( Type 2 DC CCS2 );

6. ຈຳນວນລົດທີ່ຈະຊື້ມີ: ລົດເກັ່ງໄຟຟ້າ EV ຄວາມແຮງມໍເຕີໄຟຟ້າ 140 KW ຂຶ້ນໄປ ຈຳນວນ 35 ຄັນ ການນຳໃຊ້ Battery ຕໍ່ການສາກໜຶ່ງຄັ້ງ ສາມາດໄປໄດ້ 500-610 ກິໂລແມັດຂຶ້ນໄປ;
7. ພ້ອມຮັບຜິດຊອບຕິດຕັ້ງໝໍ້ສາກພ້ອມອຸປະກອນ, ສາຍໄຟຟ້າ, ຄ່າແຮງງານ ແລະ ອຸປະກອນອື່ນໆ (ລົດໜຶ່ງຄັນຈະຕ້ອງມີໝໍ້ສາກ 2 ໜ່ວຍ ຕິດຕັ້ງຢູ່ 2 ຈຸດ);
8. ຜູ້ສະໜອງຕ້ອງຮັບຜິດຊອບຄ່າໃຊ້ຈ່າຍໃນການຂຶ້ນທະບຽນ, ຈົດທະບຽນ, ຕິດປ້າຍທະບຽນ (ປ້າຍລັດບໍລິຫານຄົບຊຸດ), ຄ່າປະກັນໄພ wifi 1 ປີ.

## II. ເງື່ອນໄຂພື້ນຖານກ່ຽວກັບບໍລິສັດທີ່ເຂົ້ານຳສະເໜີລົດ

1. ເປັນບໍລິສັດທີ່ມີໃບອະນຸຍາດ ເປັນຕົວແທນຢ່າງເປັນທາງການຈາກໂຮງງານຜູ້ຜະລິດລົດດັ່ງກ່າວ.
2. ຕ້ອງເປັນບໍລິສັດທີ່ມີໃບອະນຸຍາດດ້ານເຕັກນິກເພື່ອດຳເນີນກິດຈະການ ອຸປະກອນເຄື່ອງສາກລົດໄຟຟ້າ ທີ່ອະນຸຍາດໃຫ້ໂດຍກະຊວງພະລັງງານ ແລະ ບໍ່ແຮ່;
3. ມີໃບທະບຽນອາກອນພາຍໃນຖືກຕ້ອງຕາມລະບຽບກົດໝາຍ; ມີໃບຢັ້ງຢືນການຊຳລະອາກອນ ແລະ ພັນທະຕ່າງໆ ທີ່ອອກໃຫ້ໂດຍກະແໜງສ່ວຍສາອາກອນ ທີ່ໃຊ້ໄດ້ໃນປີ 2025;
4. ມີໃບທະບຽນວິສາຫະກິດ ທີ່ອອກໃຫ້ໂດຍກະຊວງອຸດສາຫະກຳ ແລະ ການຄ້າ;
5. ຕ້ອງປະຕິບັດຖືກຕ້ອງຕາມເງື່ອນໄຂການປະມູນທີ່ໄດ້ກຳນົດໄວ້;
6. ບໍລິສັດຕ້ອງລົງທຶນກ່ອນໃນການສະໜອງລົດ 100% ແລ້ວລັດຈະຊຳລະເປັນເງິນງົບປະມານ (ເປັນສະກຸນເງິນກີບ) ຕາມຄວາມສາມາດຂອງງົບປະມານຕົວຈິງ ຊຶ່ງຕະຫຼອດອາຍຸສັນຍາຈະບໍ່ມີການປ່ຽນທາງດ້ານມູນຄ່າ ໂດຍຖືເອົາເງິນກີບເປັນຫຼັກ.

ຫາກບໍລິສັດໃດມີຄວາມສົນໃຈ ສາມາດມາຕິດຕໍ່ຊື້ຊອງປະມູນກັບຄະນະກຳມະການ ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ນັບແຕ່ວັນທີ 24 ມີນາ 2025 ຫາ 28 ເມສາ 2025 ໃນໂມງລັດຖະການ, ເງິນຄ້ຳປະກັນເງິນຊອງປະມູນ 2% ຂອງມູນຄ່າທີ່ສະເໜີ ແລະ ຈະເປີດຊອງປະມູນໃນວັນທີ 28 ເມສາ 2025 ເວລາ 14:00 ໂມງ ທີ່ຫ້ອງປະຊຸມຊັ້ນ 1 ກະຊວງການເງິນ (ຕຶກ E) ໂດຍການເປີດຊອງຊ່ອງໜ້າຜູ້ເຂົ້າຮ່ວມ ແລະ ຄະນະກຳມະການ, ສອບຖາມເພີ່ມເຕີມ: ທ່ານ ນາງ ສຸລິນດາ ແກ້ວວິລັຍວົງ 020 5423 0093, ທ່ານ ທີວາກອນ ສຸລິຈັກ 020 2899 9891.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນທ່ານເພື່ອຊາບ ແລະ ເຂົ້າຮ່ວມຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

**ຮອງລັດຖະມົນຕີ**

ຫົວໜ້າຄະນະຮັບຜິດຊອບການປະມູນ

ລັດຖະມົນຕີ

ພູວົງ ກິດຕະວົງ



CS สแกนด้วย CamScanner